ບົດຮຽນໂຮງຮຽນວັນອາທິດ

ວັນອາທິດທີ 10 ເມສາ 2505 ( 4-10-2005 )

---

# ຄວາມຮັກທີ່ບໍ່ເລືອກໜ້າຄົນ

**ພື້ນຖານຂອງເຣື່ອງ :** ( ຢກບ 2:1-13 )

**ຄວາມຈິງໃນພຣະຄັມພີ :** ຄົນທີ່ມີຄວາມເຊື່ອແທ້ຕໍ່ພຣະເຈົ້າຈະປະຕິບັດຄວາມຮັກແລະຄວາມສົງສານຕໍ່ຄົນອື່ນຢ່າງບໍ່ເລືອກໜ້າຄົນ.

**ຜົນສະທ້ອນຕໍ່ຊີວິດ :** ເພື່ອຊ່ອຍທ່ານໃຫ້ປະຕິບັດຕໍ່ຄົນທັງຫລາຍດ້ວຍຄວາມຮັກແລະຄວາມສົງສານຢ່າງບໍ່ເລືອກໜ້າຄົນ.

## ຄວາມເຊື່ອແທ້ຈະກະທົບ ກັບຄວາມສັມພັນຂອງຂ້າພະເຈົ້າຕໍ່ຄົນອື່ນຢ່າງໃດ?

ໂບດ West Franklin Baptist Church ໄດ້ເຣີ່ມຕົ້ນເປັນບ່ອນປະກາດແລະຮັບໃຊ້ໃນປີຜ່ານມານີ້. ດຽວນີ້ມີສະມາຊິກເຖິງຫົກສິບຄົນແລ້ວປະຊຸມກັນໃນໂຮງຮຽນທ້ອງຖິ່ນ. ສະມາຊິກຫລາຍຄົນມີຖານະດີແລະຮັ່ງມີ, ໃນຂະນະດຽວກັນນັ້ນສ່ວນມາກກໍຢູ່ໃນຖານະທີ່ມີລາຍໄດ້ພໍກຸ້ມຕົວ. ຄົນງານຊຶ່ງເປັນຄົນອົພະຍົບຊາວຮິສປານິກກໍຄ່ອຍໆທະຍອຍມາຮ່ວມນຳເມື່ອໂບດໄດ້ເປີດມາໄລຍະນຶ່ງນັ້ນ. ສະມາຊິກເດີມກໍໄດ້ຕ້ອນຮັບເອົາເຂົາເຈົ້າດ້ວຍຄວາມຍິນດີ ແລະກໍໄດ້ຈັດຕຽມການເປີດໂຮງຮຽນວັນອາທິດເປັນພາສາສແປນິສໃຫ້ແກ່ພວກເຂົາເຈົ້າ.ທາງຄຣິສຕະຈັກຍັງໄດ້ໃຫ້ມີຫ້ອງຮຽນພາສາອັງກິດເປັນພາສາທີສອງນຳ. ບໍ່ມີການຈຳແນກເຊື້ອຊາດກັນໃນການສາມັກຄີທັມໃນຄອບຄົວຂອງພຣະເຈົ້າ. ເປັນດ້ວຍເຫດໃດ ຄົນທີ່ເຊື່ອເຫລົ່ານີ້ຈຶ່ງສັມພັນອັນຊົນຊື່ນຍິນດີໃນຄວາມຮັກອັນນັ້ນມອບນີ້ຊຶ່ງກັນແລະກັນ? ຄວາມຮັກຢ່າງນີ້ມີຈິງບໍ່ໃນຄຣິສຕະຈັກຂອງທ່ານ?

ໃນຂະນະທີ່ທ່ານຄົ້ນຄວ້າພຣະທັມໃນບົດຮຽນນີ້ແລ້ວ, ທ່ານຈະໄດ້ພົບວ່າຄົນທັງຫລາຍທີ່ມີຄວາມເຊື່ອຈິງໃນພຣະເຈົ້າຈະກະທຳກັບຄົນອື່ນໆດ້ວຍຄວາມຮັກແລະສົງສານຢ່າງບໍ່ເລືອກໜ້າກັນ. ທ່ານຍັງຈະໄດ້ຮຽນຮູ້ຫົນທາງທີ່ໄດ້ສະແດງອອກມາຂອງການປະພຶດອັນເປັນປໂຍດນີ້ນຳດ້ວຍ.

## ສຶກສາພຣະຄັມພີ

**1- ຢ່າລຳອຽງ :** ( ຢກບ 2:1-7 )

ຢາໂກໂບໄດ້ສຸມຈຸດຂອງເຣື່ອງນີ້ຢ່າງເຈາະຈົງໃສ່ຄຣິສຕຽນຊາວຢິວ. ນຶ່ງໃນບັນຫາທັງຫລາຍໃນຄຣິສຕະຈັກໃນເຢຣູຊາເລັມແມ່ນການເລືອກໜ້າຄົນ. ຄຣິສຕະຈັກແຫ່ງນີ້ໃຫ້ສິດທລິເຫັນແກ່ຄົນເຊື່ອທີ່ເປັນຢິວຫລາຍກວ່າຄົນຕ່າງຊາດທີ່ເປັນຄຣິສຕຽນ, ແລະການວິນິດສັຍຈາກເນື້ອເຣື່ອງທີ່ເຮົາອ່ານວ່າຄົນຮັ່ງມີຖືຕົວສູງກວ່າຄົນທີ່ທຸກຍາກ.

ການເນັ້ນໃນບົດທີ 2 ຍັງໄດ້ເວົ້າເຊັ່ນດຽວກັນກັບບົດກ່ອນນັ້ນທີ່ວ່າ: ຄວາມເຊື່ອຈິງໄດ້ທຳໃຫ້ນິສັຍແລະການປະພຶດຂອງຄົນທີ່ເຊື່ອນັ້ນມີຄວາມແຕກຕ່າງ. ສາມຂໍ້ທຳອິດໃນບົດນີ້ໄດ້ເຕືອນຄົນທີ່ເຊື່ອທັງຫລາຍວ່າເຂົາເຈົ້າບໍ່ຄວນຈະສະແດງຄວາມຮັກບັງຊັງບໍ່ຮຽງຕໍ່ຄົນອື່ນຈັກເທື່ອ. ເຫດຜົນອັນນຶ່ງສຳລັບເຣື່ອງນີ້ກໍແມ່ນວ່າ ຈຸດມຸ່ງໝາຍຂອງ

ຄວາມເຊື່ອພວກເຮົາແມ່ນມີຕໍ່ອົງພຣະຜູ້ເປັນເຈົ້າຜູ້ຊົງສງ່າຣາສີ. ພຣະເຢຊູເປັນຕົວຢ່າງຜູ້ສູງສຸດຂອງຄົນທີ່ປະຕິບັດຕໍ່ທຸກຄົນຢ່າງເທົ່າທຽມກັນ. ຢາໂກໂບໄດ້ຕັກເຕືອນຄົນທີ່ປະກາດວ່າຕົນມີຄວາມເຊື່ອຕໍ່ພຣະອົງນັ້ນບໍ່ໃຫ້ສະແດງອອກມາຊຶ່ງຄວາມຮັກບັງຊັງບໍ່ຮຽງ, ບໍ່ໃຫ້ຖືຜູ້ນັ້ນຫລາຍກວ່າຜູ້ນີ້.

ຢາໂກໂບໄດ້ວາດພາບໃຫ້ເຫັນເຖິງຄົນທີ່ຮັກບັງຊັງບໍ່ຮຽງທີ່ເພິ່ນວ່ານີ້ດ້ວຍເຣື່ອງຂອງຄົນສອງຄົນທີ່ເປັນແຂກໃນຂະນະທີ່ຄຣິສຕະຈັກມີການນະມັສການ. ຄົນໆນຶ່ງເປັນຄົນມີຖານະດີ ແລະແຂກຄົນທີສອງຊີ້ໃຫ້ເຫັນສະພາບທີ່ເປັນຄົນທຸກຍາກ. ສະພາບເຊັ່ນນີ້ມັນເປັນການທົດສອບສຳລັບຄຣິສຕະຈັກວ່າຈະໃຫ້ກຽດຄົນນຶ່ງຫລາຍກວ່າຄົນອື່ນຫລືບໍ່?

ການຕັດສິນຣາຄາຂອງຄົນດ້ວຍການເຫັນດ້ານນອກນັ້ນແມ່ນເປັນການກົງກັນຂ້າມກັບການເປັນຕົວຢ່າງແລະການສິດສອນຂອງພຣະເຢຊູທີ່ໄດ້ເວົ້າວ່າ, " ຢ່າຕັດສິນຕາມທີ່ເຫັນພາຍນອກ ແຕ່ຈົ່ງຕັດສິນຕາມທາງຍຸດຕິທັມ " ( ຢຮ 7:14 ). ພຣະອົງເວົ້າວ່າທັມມະຊາດ ແລະຣາຄາອັນແທ້ຈິງຂອງຄົນໆນຶ່ງນັ້ນບໍ່ຂຶ້ນກັບການເຫັນພາຍນອກ.

ຢາໂກໂບໄດ້ຕັກເຕືອນຄົນທີ່ອ່ານພຣະທັມຂອງເພິ່ນວ່າສ່ວນຫຼາຍພຣະເຈົ້າໄດ້ ເລືອກເອົາຄົນທຸກຍາກໃນໂລກນີ້ໃຫ້ເປັນຄົນຮັ່ງມີໃນຄວາມເຊື່ອ. ເພິ່ນຍັງໄດ້ຢືນຢັນວ່າຄວາມຮັ່ງມີອັນແທ້ຈິງນັ້ນຜູ້ເປັນເຈົ້າຂອງແມ່ນພວກທີ່ຮັບມໍຣະດົກແຫ່ງແຜ່ນດິນສວັນ. ຄວາມຮັ່ງມີ, ຕາມມາດຕະຖານຂອງພຣະເຈົ້ານັ້ນ, ບໍ່ແມ່ນເງິນຄຳແລະສິ່ງຂອງທີ່ເງິນຄຳຊື້ຫາມາໄດ້, ແຕ່ວ່າແມ່ນທັມມະຊາດຂອງວິນຍານເຊັ່ນຄວາມເຊື່ອ, ແລະຄວາມຮັກ. ນີ້ແຫລະແມ່ນຄວາມຮັ່ງມີແຫ່ງແຜ່ນດິນສວັນທີ່ພຣະເຈົ້າໄດ້ສັນຍາຕໍ່ຄົນທັງຫລາຍທີ່ຮັກພຣະອົງ.

ຈົ່ງເບິ່ງອຸທາຫອນເຣື່ອງຄົນຮັ່ງມີ ແລະຄົນທຸກຍາກຕື່ມອີກ. ມັນເປັນການເຮັດບໍ່ຖືກຕ້ອງທີ່ຈະລົດກຽດຄົນທີ່ທຸກຍາກລົງ. ຕາມຮີດຄອງທັມນຽມແລ້ວສ່ວນຫຼາຍຄົນຮັ່ງມີມັກເປັນຄົນທີ່ຂົ່ມເຫັງຄຣິສຕຽນ, ໃຊ້ອຳນາດເກີນຄວນຕໍ່ພວກເຂົາ ແລະໄດ້ລາກແກ່ພວກເຂົາຂຶ້ນສານ ໃນທີ່ນັ້ນຄົນທີ່ເຊື່ອໄດ້ຖືກກ່າວຫາຄະດີຢ່າງຜິດໆ. ນອກຈາກນັ້ນ,ພວກຄົນຮັ່ງມີຍັງໄດ້ປມາດພຣະນາມຂອງພຣະຄຣິດຊຶ່ງເປັນພຣະນາມຊຶ່ງພວກຄຣິສຕຽນໄດ້ນັບຖື. ການປມາດແມ່ນການເວົ້າທີ່ຕໍ່ສູ້ຄົນໃດຄົນນຶ່ງດ້ວຍເຈດຕະນາ.

ຕາມຄວາມເປັນຈິງແລ້ວຢາໂກໂບບໍ່ມີເຈດຕະນາຈະຍົກເອົາການເອົາປຽບຫລືຄວາມເລື່ອມລ້ຳຕ່ຳສູງໃສ່ກັນຣະຫວ່າງຄົນມີແລະຄົນຈົນ. ແທນທີ່ວ່າຈະເປັນດັ່ງນັ້ນ ເພິ່ນຮ້ອງຂໍໃຫ້ຄົນທີ່ອ່ານພຣະທັມນີ້ໃຫ້ປະຕິເສດຫລືບໍ່ເຮັດຄວາມເລື່ອມລ້ຳຕ່ຳສູງ, ຫລືຮັກບັງຊັງບໍ່ຮຽງກັນ ແຕ່ວ່າໃຫ້ພາກັນຮັກທັງຄົນຮັ່ງມີແລະຄົນຈົນສມ່ຳສເມີກັນ.

## <u>໒- ຈົ່ງປະຕິບັດບັນຍັດຮັກໃຫ້ສຳເຣັດ :</u> ( ຢກບ ໒:8-11 )

ຄຣິສຕຽນຊາວຢິວມີຄວາມລຶ້ງເຄີຍກັບພຣະບັນຍັດຂອງພຣະເຈົ້າ, ໂດຍສະເພາະຂໍ້ທີ່ມີຄວາມໝາຍສຳຄັນເຊັ່ນ, " ຈົ່ງຮັກເພື່ອນບ້ານເໝືອນດັ່ງຮັກຕົນເອງ ". ຢາໂກໂບກ່າວເຖິງຂໍ້ນີ້ວ່າເປັນພຣະບັນຍັດຂອງເຈົ້າຊີວິດຊຶ່ງໝາຍເຖິງສິດອຳນາດຂອງມັນເມື່ອມັນມາຈາກເຈົ້າຊີວິດ ກ່າວຄືພຣະເຈົ້າມະຫາກະສັດເຢຊູທີ່ໄດ້ປະກາດເຣື່ອງນີ້ວ່າເປັນ " ມະຫາບັນຍັດຂໍ້ທີສອງ " ( ມຣກ 12:31 ). ຢາໂກໂບຍັງໄດ້ເຕືອນຄົນທີ່ອ່ານພຣະທັມນີ້ວ່າ ບັນຍັດຂໍ້ນີ້ໄດ້ບັນຍັດໄວ້ໃນພຣະຄັມພີເດີມ ( ລວ 19:18 ). ຄົນທີ່ເຊື່ອທຸກຄົນຈະຕ້ອງເຫັນພ້ອມທີ່ຈະປະຕິບັດຕາມບັນຍັດນີ້ໃນທາງທີ່ຟັງຄວາມ ແລະຈະຕ້ອງປະຕິບັດໃຫ້ດີອີກດ້ວຍ.

ແຕ່ວ່າຄຳວ່າ ຮັກເພື່ອນບ້ານເໝືອນຮັກຕົນເອງນັ້ນມີໝາຍວ່າຢ່າງໃດ? ຈົ່ງທວນຄືນເບິ່ງໂອກາດເມື່ອພຣະເຢຊູໄດ້ຕອບຄຳຖາມທີ່ຄ້າຍຄືກັນນີ້ດ້ວຍການເລົ່າເຣື່ອງ " ຊາວຊາມາເຣັຽຜູ້ໃຈດີ " ( ລກ 10:25-37 ). ຄວາມຮັກຂອງຄຣິສຕຽນບໍ່ແມ່ນເປັນເໝືອນອາລົມ ແຕ່ແມ່ນຄວາມປະສົງ. ການຮັກຄົນອື່ນນັ້ນໝາຍຄວາມວ່າເລືອກທີ່ຈະໃຫ້ອະພັຍ, ຈະດີ, ແລະຈະມີໃຈກວ້າງຂວາງຕໍ່ເຂົາເຈົ້າ ໂດຍບໍ່ກ່ຽວຂ້ອງວ່າເຂົາເຈົ້າຈະເປັນຢ່າງໃດ, ເຂົາເຈົ້າຈະຫາລ້ຽງຊີບກັນຢ່າງໃດ, ຫລືວ່າເຂົາຈະເກີດມາແຕ່ໃສ. ດັ່ງນັ້ນມັນຈຶ່ງເປັນການແຈ້ງຂາວທີ່ວ່າການປະຕິບັດການເລື່ອມລ້ຳຕ່ຳສູງ, ການເຫັນແກ່ໜ້າກັນຣະຫວ່າງຄົນນຶ່ງຕໍ່ຄົນນຶ່ງດ້ວຍການເບິ່ງພາຍນອກນັ້ນ ແນ່ນອນທີ່ສຸດຈຶ່ງເປັນການລະເມີດຕໍ່ພຣະບັນຍັດຂອງພຣະເຈົ້າ. ການກະທຳທີ່ຜິດອັນນີ້ໝາຍຄວາມວ່າທ່ານໄດ້ກະທຳບາບ ແລະຈະຕ້ອງຕັດສິນດ້ວຍບັນຍັດໃນຖານເປັນຜູ້ຝ່າຝືນ. ທີ່ກ່າວມານີ້ຢາໂກໂບໄດ້ໃຊ້ຄຳແຂງແຮງຢ່າງເອົາຈິງເອົາຈັງກັບຄົນເຄີຍເຮັດເຊັ່ນນີ້.

**ເຫັນແກ່ໜ້າ**

ໃນພາສາກຣີກຄຳທີ່ວ່າ ເຫັນແກ່ໜ້າ ຫລື "ສະແດງຄວາມນັບຖືຄົນໃດຄົນນຶ່ງ" ໝາຍເຖິງການ "ການຕ້ອນຮັບເພາະເຫັນແກ່ໜ້າ" ເປັນຄຳສັບສະແລງທີ່ຄົນກຣີກນິຍົມເວົ້າໃນສມັຍພຣະຄັມພີໃຫມ່. ຄຳນີ້ໄດ້ປາກົດໃນພຣະທັມໂຣມ ໒:11 ແລະພຣະທັມເອເຟໂຊ 6:9 ອັຄສາວົກໂປໂລກໍໄດ້ໃຊ້ຕັກເຕືອນຄົນໃນເມືອງເອເຟໂຊທີ່ກະທຳຢ່າງບໍ່ຖືກຕ້ອງຕໍ່ທາດໃຊ້ຂອງເຂົາເຈົ້າ. ພາສາກຣີກຍັງຕີຄວາມໝາຍຂອງຄຳນີ້ວ່າ "ໜ້າກາກ" ຊຶ່ງເປັນການຕີຄວາມໝາຍທີ່ຕ່ຳ(ຊົ່ວ)ຫລາຍ. ການເຫັນແກ່ໜ້າ, ຫລືການສະແດງຄວາມນັບຖືບາງຄົນ ໃນພຣະຄັມພີໃຫມ່ໝາຍເຖິງການນັບຖືເພາະເຫັນແກ່ປາກົດການທາງນອກເຊັ່ນ ຜູ້ມີຊັ້ນຫລືຕຳແໜ່ງສູງ, ແລະຜູ້ທີ່ຮັ່ງມີແທນທີ່ຈະເບິ່ງຄຸນສົມບັດທາງໃນຂອງຄົນໆ ນັ້ນ. ຖ້ອຍຄຳນີ້ໝາຍເຖິງການເຫັນແບບເຜີນໆ ຕື້ນໆ ບໍ່ເຫັນຄຸນສົມບັດທາງໃນຫລືຄວາມສາມາດຂອງຄົນໆ ນັ້ນ. ພຣະເຈົ້າບໍ່ສຳແດງຄວາມເຫັນແກ່ໜ້າຜູ້ໃດ.

ຢາໂກໂບບອກໄວ້ລ່ວງໜ້າວ່າຄົນທີ່ໄດ້ຍິນພຣະທັມອາດຈະພະຍາຍາມເຮັດໄປຢ່າງແບບບໍ່ຮູ້ສຶກໃດໆເພາະຄິດວ່າຕົນໄດ້ເຮັດຕາມພຣະບັນຍັດຂໍ້ອື່ນໆຫລາຍຂໍ້, ແຕ່ຢາໂກໂບໄດ້ບອກວ່າ, "ເພາະວ່າຖ້າບຸກຄົນໃດຖືຮັກສາພຣະບັນຍັດໄດ້ທັງໝົດ ແຕ່ຜິດຢູ່ຂໍ້ດຽວ ຜູ້ນັ້ນກໍກາຍເປັນຜູ້ຜິດພຣະບັນຍັດທັງໝົດ." ສົມມຸດຕົວຢ່າງວ່າທ່ານໄດ້ຖືກແຂວນຢູ່ໃຕ້ຂື່ສູງໆດ້ວຍໂສ້ທີ່ມີສິບຕ່ອງ. ຖ້າຫາກຕ່ອງໂສ້ນັ້ນພຽງແຕ່ຕ່ອງດຽວຂາດໄປ ແນ່ນອນທ່ານຕ້ອງຕົກລົງມາບໍ່ຕ່າງຫຍັງກັນກັບຕ່ອງໂສ້ທັງສິບຕ່ອງນັ້ນຂາດນຳກັນທັງໝົດ. ພຣະທັມໄດ້ບອກວ່າການທຳໂທດສຳລັບການຝ່າຝືນບັນຍັດຂອງພຣະເຈົ້ານັ້ນຄືຄວາມຕາຍ ( ໂຣມ 6:໒3 ); ເຖິງແມ່ນວ່າຜູ້ລະເມີດນັ້ນຈະໄດ້ຝ່າຝືນບັນຍັດຂໍ້ດຽວ ຫລືບັນຍັດໝົດທຸກຂໍ້, ການຕັດສິນລົງໂທດກໍແມ່ນຢ່າງດຽວກັນ.

ຢາໂກໂບໄດ້ອະທິບາຍຈຸດນີ້ກວ້າງອອກໄປດ້ວຍການເນັ້ນວ່າຄວາມບາບບໍ່ເປັນພຽງເຣື່ອງການບໍ່ຟັງຄວາມບັນຍັດບາງຂໍ້ເທົ່ານັ້ນ, ເຊັ່ນຕົວຢ່າງວ່າ ຢ່າຫລິ້ນຊູ້ ຫລືວ່າ ຢ່າຂ້າຄົນ. ບາບໝາຍຄວາມວ່າຕໍ່ສູ້ພຣະເຈົ້າຊຶ່ງເປັນຜູ້ຕັ້ງພຣະບັນຍັດທັງໝົດ. ການບໍ່ນັບຖືຜູ້ຕັ້ງບັນຍັດແມ່ນເປັນການທຳໃຫ້ຄົນນັ້ນກາຍເປັນຜູ້ຝ່າຝືນພຣະບັນຍັດ. ບໍ່ມີໃຜສາມາດອວດໄດ້ຢ່າງຖືກຕ້ອງໃນເຣື່ອງການຮັກສາບັນຍັດບາງຂໍ້ຂອງພຣະເຈົ້າ ໃນຂະນະທີ່ລາວກຳລັງເປັນຄົນຜິດຖານຝ່າຝືນບັນຍັດຂໍ້ອື່ນໆຢູ່. ເຫດນີ້ແຫລະບັນຍັດທີ່ໃຫຍ່ກວ່າບັນຍັດຂໍ້ອື່ນໆທັງໝົດຈຶ່ງແມ່ນ: "ຈົ່ງຮັກອົງພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດໃຈ, ດ້ວຍສຸດຈິດ, ດ້ວຍສຸດຄວາມຄິດ, ແລະດ້ວຍສຸດກຳລັງຂອງເຈົ້າ." ( ມຣກ 1໒:30 ). ບຸກຄົນໃດທີ່ຮັກພຣະເຈົ້າດ້ວຍສຸດຈິດສຸດໃຈຈຶ່ງບໍ່ຢາກຈະເຮັດໃຫ້ພຣະເຈົ້າເສັຽພຣະທັຍດ້ວຍການບໍ່ຟັງບັນຍັດຂໍ້ອື່ນໆ. ຄວາມຮັກນຳພາໃຫ້ພຣະບັນຍັດຂອງພຣະເຈົ້າສຳເຣັດລົງ.

<u>3- ຈົ່ງສະແດງຄວາມສົງສານອອກມາ:</u> ( ຢກບ ໒:1໒-13 )

ຈົ່ງຈົດຈຳຄຳອ້າງອີງສາມຢ່າງຂອງການຕັດສິນຂອງພຣະເຈົ້າໃນຂໍ້ເຫລົ່ານີ້. ທຳອິດຢາໂກໂບຊຸກຍູ້ໃຫ້ຄົນທີ່ໄດ້ອ່ານພຣະທັມຂອງເພິ່ນໃຫ້ ເວົ້າແລະເຮັດ ເຫມືອນຢ່າງຄົນທີ່ຈວນຈະໄດ້ຮັບການພິພາກສາດ້ວຍກົດທີ່ໃຫ້ມີເສຣີພາບ." ການຮັກສາຄຳເວົ້າແມ່ນເປັນສິ່ງຈຳເປັນຖ້າວ່າພວກເຮົາຢາກຫລີກການປະຕິບັດຢ່າງຮັກບັງຊັງບໍ່ຽງ. ທ່ານເຄີຍໄດ້ຈັບຜິດຕົນເອງເມື່ອໃຊ້ຄຳເວົ້າທີ່ສະແດງອອກມາເຖິງການຈຳແນກເຊື້ອຊາດຈັກເທື່ອບໍ່? ຫລືວ່າໄດ້ເວົ້າຢອກລໍ້ຢ່າງມ່ວນຊື່ນທີ່ສຽດສີຄົນທີ່ມາຈາກສັງຄົມແລະເຊື້ອຊາດທີ່ແຕກຕ່າງກັບກັບເຮົາບໍ່? ບົດຮຽນຕໍ່ໄປຂອງເຮົາຈະກ່ຽວຂ້ອງກັບຄວາມສຳຄັນຂອງຄຳເວົ້າຂອງເຮົາທັງມວນ, ແຕ່ວ່ານີ້ແມ່ນການລະມັດລະວັງທີ່ພວກເຮົາທັງໝົດຕ້ອງການ.

ຄຣິສຕຽນສາມາດພຽງແຕ່ໃຫ້ເວົ້າຄຳວ່າ ຄວາມລຳອຽງ ຫລື ຄວາມເຫັນແກ່ໜ້າກັນໄດ້ເທົ່ານັ້ນ ແຕ່ວ່າບໍ່ໃຫ້ພາກັນເຮັດ. ຢາໂກໂບໄດ້ຕັກເຕືອນຄົນທີ່ເຊື່ອໃຫ້ຈົດຈຳວ່າການທີ່ເຮົາກະທຳຕໍ່ຄົນອື່ນນັ້ນມັນຄືການພິພາກສາໄປນຳໃນຕົວຂອງມັນແລ້ວ. ຄວາມອະຄະຕິ ມາຈາກການກະທຳທີ່ເຫັນຄຸນຄ່າຕ່ຳຕໍ່ຄົນອື່ນໃນສິ່ງໃດສິ່ງນຶ່ງທີ່ບໍ່ສົມ

ຄວນ ເຊັ່ນຕົວຢ່າງການຕີຣາຄາຄົນໃດຄົນນຶ່ງໃນທັນທີໂດຍໄດ້ເຫັນແຕ່ພຽງພາຍນອກຂອງເຂົາເທົ່ານັ້ນ.

ຕາມປົກກະຕິແລ້ວພວກເຮົາບໍ່ໄດ້ຄິດເຖິງບັນຍັດ ແລະເສຣີພາບນັ້ນວ່າເປັນຂອງກັນແລະກັນ. ເຖິງຢ່າງໃດກໍດີ ຢາໂກໂບໄດ້ອ້າງເຖິງພຣະບັນຍັດຂອງຄວາມຮັກອີກຊື່ງເປັນບັນຍັດທີ່ໃຫ້ເຮົາມີເສຣີພາບ. ເມື່ອເຮົາໄດ້ທຳຕາມບັນຍັດຄືການຮັກເພື່ອນບ້ານຂອງເຮົາເຫມືອນດັ່ງເຮົາໄດ້ຮັກເຮົາເອງແລ້ວ, ພວກເຮົາກໍບໍ່ໄດ້ເປັນຂ້າທາດຂອງຄວາມອະຄະຕິ. ດ້ວຍເຫດນີ້ແຫລະ ບັນຍັດຮັກຈິ່ງກາຍເປັນບັນຍັດແຫ່ງເສຣີພາບສຳລັບພວກເຮົາ. ການຖືກຕັດສິນດ້ວຍບັນຍັດນີ້ຫມາຍຄວາມວ່າພວກເຮົາຕ້ອງຮັບຜິດຊອບຕໍ່ພຣະເຈົ້າເພາະວ່າບໍ່ໄດ້ເອົາໃຈໃສ່ທຳຕາມນ້ຳພຣະທັຍຂອງພຣະອົງ.

ອັນທີສອງອ້າງເຖິງການພິພາກສາຈະມີຂຶ້ນດ້ວຍຄຳວ່າທີ່ວ່າ, " ເພາະວ່າໃນການພິພາກສາ ພຣະເຈົ້າຈະບໍ່ຊົງສະແດງຄວາມເມດຕາຕໍ່ຜູ້ທີ່ບໍ່ໄດ້ສະແດງຄວາມເມດຕາ. ພຣະເຈົ້ານັ້ນເມດຕາຕໍ່ຄົນທັງຫລາຍທີ່ໄດ້ສະແດງອອກຊຶ່ງຄວາມເມດຕາຂອງພຣະອົງຕໍ່ຄົນອື່ນ. ໃນການເທສນາເຣື່ອງຄວາມສຸກນັ້ນ ພຣະເຢຊູໄດ້ເວົ້າເຖິງຄວາມຈິງອັນນີ້ຄືກັນດ້ວຍຄຳເວົ້າແບບຄຸ້ນໆຫູທີ່ວ່າ, " ຜູ້ໃດມີໃຈກະຣຸນາກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ຮັບພຣະກະຣຸນາຕອບ." ( ມທ 5:7 ). ຄົນທັງຫລາຍທີ່ບໍ່ໄດ້ສະແດງຄວາມກະຣຸນາກໍໄດ້ເຮັດໃຫ້ເຫັນຄວາມຈິງທີ່ເຂົາບໍ່ເຄີຍໄດ້ຂອບພຣະຄຸນຄວາມເມດຕາຂອງພຣະເຈົ້າທີ່ມີຕໍ່ພວກເຂົາ. ເຖິງຢ່າງໃດກໍດີ ການພິພາກສາຂອງພຣະເຈົ້າກໍຈະບໍ່ມີຄວາມເມດຕາຕໍ່ພວກເຂົາເລີຍ.

ຄຳເວົ້າສຸດທ້າຍໃນເຣື່ອງນີ້ເປັນພຽງຄຳເວົ້າສັ້ນໆພຽງບໍ່ພໍເທົ່າໃດຄຳທີ່ຢືນຢັນເຖິງຊັຍຊະນະ: " ສ່ວນຄວາມເມດຕາຍ່ອມມີຊັຍຊະນະເຫນືອການພິພາກສາ." ຄວາມເມດຕາ ແລະການພິພາກສາທັງສອງຢ່າງມາຈາກພຣະເຈົ້າ; ມັນບໍ່ໄດ້ຂັດກັນ. ເພາະວ່າພຣະເຈົ້ານັ້ນທ່ຽງທັມ, ພຣະອົງຈະຕ້ອງຕັດສິນຄວາມບາບ. ເຖິງຢ່າງໃດກໍດີ ພຣະອົງຕ້ອງການເປັນຜູ້ເມດຕາຕໍ່ຄົນບາບທັງຫລາຍແທນທີ່ຈະເປັນຜູ້ລົງໂທດເຂົາ. ພຣະອົງເຮັດໃຫ້ຄວາມເມດຕາມີຊັຍຊະນະຕໍ່ການພິພາກສາດ້ວຍການໃຫ້ພຣະບຸດຂອງພຣະອົງມາເປັນເຄື່ອງຖວາຍບູຊາເພື່ອບາບຂອງພວກເຮົາ. ຄົນທຸກຄົນທີ່ຮັບເອົາຂອງຂວັນທີ່ເປັນພຣະຄຸນຄວາມເມດຕາຂອງພຣະເຈົ້າດ້ວຍຄວາມເຊື່ອ ຈະໄດ້ຫລຸດພົ້ນຈາກການພິພາກສາທີ່ເຂົາສົມຄວນຈະໄດ້ຮັບ.

ຄວາມເມດຕາຍັງມີຊັຍເຫນືອການພິພາກສາໃນຂະນະທີ່ຄົນທີ່ເຊື່ອໄດ້ສະແດງຄວາມເມດຕາຕໍ່ຄົນທີ່ໄດ້ທຳໃຫ້ເຂົາເສັຽໃຈນຳອີກດ້ວຍ. ເພາະວ່າພວກເຮົາມີປະສົບການຈາກພຣະເມດຕາຂອງພຣະເຈົ້າ, ພວກເຮົາຄວນສົ່ງຄວາມເມດຕາອັນດຽວກັນນັ້ນໃຫ້ແກ່ຄົນອື່ນນຳ. ຖ້າຫາກບໍ່ເຮັດດັ່ງນັ້ນ ມັນກໍເປັນການປະຕິເສດຕໍ່ການປະກາດຂອງເຮົາເອງທີ່ວ່າໄດ້ເປັນຜູ້ທີ່ພຣະເຈົ້າໃຫ້ອະພັຍແລ້ວ.

ຜູ້ປະກາດໂປໂລໄດ້ເຕືອນວ່າ, " ດ້ວຍວ່າເຮົາທຸກຄົນຕ້ອງຢືນຢູ່ຫນ້າບັນລັງພິພາກສາຂອງພຣະເຈົ້າ " ( ໂຣມ 14:10 ). ຄວາມຈິງອັນສຳຄັນຕໍ່ການນັບຖືພຣະເຈົ້ານັ້ນຄວນຈະມີການກະທົບອັນແຂງແຮງໃນທາງທີ່ເຮົາໄດ້ກະທຳກັບຄົນອື່ນ.

ການສະແດງຄວາມລຳອຽງ ຫລືຄວາມເຫັນແກ່ຫນ້າກັນນີ້ ແມ່ນການກະທຳທີ່ມັກເຫັນກັນຢູ່ເລື້ອຍໆໃນສັງຄົມຂອງເຮົາ. ບົດຮຽນນີ້ຈະຊ່ອຍເຫລືອເຮົາໃຫ້ເຂົ້າໃຈວ່າການປະພຶດເຊັ່ນນີ້ເປັນການລ່ວງລະເມີດຕໍ່ບັນຍັດຮັກຂອງພຣະເຈົ້າ.

- ຄວາມຮັກຈິງແມ່ນສະແດງອອກເມື່ອຄົນທີ່ເຊື່ອໄດ້ໃຫ້ຄວາມເມດຕາແກ່ຄົນອື່ນ.
- ພຣະເຈົ້າຈະພິພາກສາຄົນທັງຫລາຍທີ່ບໍ່ຢຸດເຊົາການເຫັນແກ່ຫນ້າ ຫລືວ່າການຮັກແບບລຳອຽງ.

( ອຸປະຖັມໂດຍລາວບັບຕິສສັມພັນ - WWW.LSBF.ORG )